

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ............ ໜ້າ 01-07**

**II. ການເຄື່ອນໄຫວວຽກງານຂອງການນຳຂັ້ນສູງ ແລະ ຄຕພ.................................... ໜ້າ 08-13**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ປະຈຳເດືອນ **ພະຈິກ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງ ບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ພັກ ກໍຄືລັດຖະບານ ສສ ຫວຽດນາມ ສືບຕໍ່ໃຫ້ຄວາມສຳຄັນກັບວຽກງານຕ່າງປະເທດ,ພ້ອມນັ້ນ ໄດ້ດຳເນີນກອງປະຊຸມສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດຫວຽດນາມຊຸດທີ XV.

ວັນທີ 30/10-2/11/2022, ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ, ໄດ້ພົບປະກັບ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ. ໂອກາດດັ່ງກ່າວ, ສະຫາຍ ສີ ຈິ້ນຜິງ ໄດ້ປະດັບຫຼຽນມິດຕະພາບໃຫ້ແກ່ ສະຫາຍ ຫງວຽນ ຟູຈ້ອງ ທີ່ເປັນສັນຍາລັກແຫ່ງຄວາມຮັກແພງ ແລະ ມິດຕະພາບຖານສະຫາຍອ້າຍນ້ອງ ລະຫວ່າງ ສປ ຈີນ-ສສ ຫວຽດນາມ, ສອງຝ່າຍ ເຫັນດີເພີ່ມທະວີການຮ່ວມມືຮອບດ້ານ, ການແລກປ່ຽນທາງຍຸດທະສາດ, ເພີ່ມຄວາມໄວ້ເນື້ອເຊື່ອໃຈທາງການເມືອງ, ຊ່ວຍກັນແກ້ໄຂຂໍ້ຂັດແຍ່ງຢ່າງສົມເຫດສົມຜົນ ເພື່ອຊຸກຍູ້ໃຫ້ການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານຫວຽດນາມ-ຈີນ ກ້າວຂຶ້ນສູ່ລະດັບໃໝ່ ແລະ ຈະຍຶດໝັ້ນແນວທາງ 16 ຕົວໜັງສື ແລະ ຈິດໃຈ 4 ດີ. ສອງຝ່າຍ ຍັງໄດ້ລົງນາມເອກະສານ (MOU) 13 ສະບັບ ເປັນຕົ້ນການຮ່ວມມືລະຫວ່າງຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ແລະ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ; ອົງການມິດຕະພາບຫວຽດນາມ ກັບ ສະມາຄົມປະຊາຊົນຈີນເພື່ອມິດຕະພາບກັບຕ່າງປະເທດ; ການຮ່ວມມືດ້ານການເມືອງ, ເສດຖະກິດ-ສັງຄົມ, ການຄ້າ, ວັດທະນະທຳ-ທ່ອງທ່ຽວ ແລະ ອື່ນໆ.

ວັນທີ 13/11/2022, ທ່ານ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Olaf Scholz, ນາຍົກລັດຖະມົນຕີເຢຍລະມັນ ໃນໂອກາດຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ. ທ່ານ ຫງວຽນ ຟູຈ້ອງ ໄດ້ສະແດງຄວາມຊົມເຊີຍຕໍ່ການຢ້ຽມຢາມຄັ້ງນີ້, ຊຶ່ງເປັນຂີດໝາຍສຳຄັນຂອງການພົວພັນສອງປະເທດ. ການພົວພັນຂອງສອງປະເທດ ໄດ້ກ້າວສູ່ໄລຍະການພັດທະນາໃໝ່ໃນສະພາບການທີ່ສາກົນມີການຜັນແປຢ່າງສັບສົນ; ສອງຝ່າຍເຫັນດີສືບຕໍ່ການພົວພັນຮ່ວມມືເພື່ອຜົນປະໂຫຍດຂອງປະຊາຊົນສອງປະເທດ. ທ່ານ Olaf Scholz ໄດ້ສະແດງຄວາມປິຕິຊົມຊື່ນຕໍ່ການພົວພັນສອງປະເທດ, ຖືສຳຄັນບົດບາດຂອງ ສສ ຫວຽດນາມ ໃນກອບອາຊຽນ ແລະ ສາກົນ; ເຫັນດີຍົກສູງການພົວພັນສອງປະເທດ, ສຸມໃສ່ແຜນການປະຕິບັດຄູ່ຮ່ວມຍຸດທະສາດ ແລະ ເພີ່ມທະວີການຮ່ວມມືລະຫວ່າງສອງປະເທດ ໃນຂົງເຂດຕ່າງໆ.

ວັນທີ 15/11/2022, ສະພາແຫ່ງຊາດຫວຽດນາມ ໄດ້ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຊຸດທີ XV ໂດຍການເຂົ້າຮ່ວມຂອງ ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ; ສະຫາຍ ຫງວຽນ ຊວນຟຸກ, ປະທານປະເທດ ແລະ ສະຫາຍ ຟາມ ມິງຈິງ, ນາຍົກລັດຖະມົນຕີ. ສະຫາຍ ເວືອງ ດິ່ງເຫວະ, ປະທານສະພາແຫ່ງຊາດ ໄດ້ລາຍງານເນັ້ນໜັກໃຫ້ລັດຖະບານ ຕ້ອງຮັກສາເສດຖະກິດມະຫາພາກໃຫ້ເປັນປົກກະຕິ; ສຸມໃສ່ແກ້ໄຂບັນດາຂໍ້ຫຍຸ້ງຍາກ, ຂໍ້ຈຳກັດໃນການປ່ອຍເງິນລົງທຶນສາທາລະນະ, ການແກ້ໄຂບັນດາອົງການສິນເຊື່ອ, ໂຄງການ, ວິສາຫະກິດຂະໜາດນ້ອຍ; ແກ້ໄຂການສະໜອງນ້ຳມັນ ເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມ; ສືບຕໍ່ເພີ່ມທະວີວຽກງານປ້ອງກັນພະຍາດລະບາດ, ໄພພິບັດທຳມະຊາດ, ການປ່ຽນແປງຂອງດິນຟ້າອາກາດ,  ເສີມຂະຫຍາຍນ້ຳໃຈສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຜ່ານຜ່າທຸກຄວາມຫຍຸ້ງຍາກ, ສູ້ຊົນປະຕິບັດແຜນການປີ 2022  ແລະ 2023 ໃຫ້ບັນລຸໝາກຜົນສູງສຸດ. ກອງປະຊຸມຄັ້ງນີ້, ຍັງໄດ້ຮັບຮອງເອົາກົດ ໝາຍ 6 ສະບັບ ແລະ ມະຕິຂອງກອງປະຊຸມ 12 ສະບັບ.

**2). ພັກກອມມູນິດຈີນ**

ວັນທີ 2/11/2022, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ສປ ຈີນ ໄດ້ຕ້ອນຮັບ ທ່ານ ມູຮາມັດ ຊາຣິຟ, ນາຍົກລັດຖະມົນຕີປາກິດສະຖານ ໃນໂອກາດຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ. ທ່ານ ສີ ຈິ້ນຜິງ ໄດ້ສະແດງຄວາມຊົມເຊີຍປາກິດສະຖານ ໃນການຮ່ວມມືມິດຕະພາບກັບ ສປ ຈີນ ແລະ ສະໜັບສະໜູນຫຼັກການຈີນດຽວຕະຫຼອດມາ ແລະ ໄດ້ແຈ້ງຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 20 ຂອງພັກກອມມູນິດຈີນ. ທ່ານ ຊາຣິຟ ກ່າວວ່າ ສປ ຈີນ ແມ່ນພື້ນຖານນະໂຍບາຍຕ່າງປະເທດ ແລະ ຄວາມຮັບຮູ້ຂອງອົງການຕ່າງໆໃນສັງຄົມປາກິດສະຖານ, ໃນໂລກນີ້ ບໍ່ມີປະເທດໃດສາມາດຊ່ວຍເຫຼືອປາກິດສະຖານ ແລະ ປະເທດອື່ນໆ ຄືກັບ ສປ ຈີນ. ປາກິດສະຖານ ສະໜັບສະໜູນຂໍ້ລິເລີ່ມການພັດທະນາໂລກ ແລະ ຄວາມໝັ້ນຄົງຂອງໂລກ ທີ່ສະເໜີອອກໂດຍ ທ່ານ ສີ ຈິ້ນຜິງ ແລະ ຈະຮ່ວມກັບ ສປ ຈີນ ຢ່າງສະໜິດແໜ້ນ ເພື່ອສັນຕິພາບໃນພາກພື້ນ ແລະ ສາກົນ.

ວັນທີ 4/11/2022, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ສປ ຈີນ ໄດ້ຕ້ອນຮັບ ທ່ານ Olaf Scholz, ນາຍົກລັດຖະມົນຕີເຢຍລະມັນ ເນື່ອງໃນໂອກາດຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ. ສອງຝ່າຍ ໄດ້ແລກປ່ຽນສາຍພົວພັນມິດຕະພາບ, ຊຶ່ງ ທ່ານ ສີ ຈິ້ນຜິງ ໄດ້ມີຄຳເຫັນວ່າ ການຢ້ຽມຢາມຄັ້ງນີ້ ເປັນການເສີມຂະຫຍາຍການຮ່ວມມືທາງດ້ານການຄ້າ-ການລົງທຶນລະຫວ່າງສອງປະເທດ ໃຫ້ນັບມື້ນັບສູງຂຶ້ນ ແລະ ໃນປີ 2022 ນີ້ ແມ່ນປີຄົບຮອບ 50 ປີ ການພົວພັນການທູດ ສປ ຈີນ-ເຢຍລະມັນ. ທ່ານ ສີ ຈິ້ນຜິງ ຍັງໄດ້ແຈ້ງຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 20 ຂອງພັກກອມມູນິດຈີນ.

ວັນທີ 14/11/2022, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ສປ ຈີນ ໄດ້ພົບປະແບບເຊິ່ງໜ້າຄັ້ງທຳອິດ ກັບ ທ່ານ ໂຈ ໄບເດັນ, ປະທານາທິບໍດີອາເມລິກາ ທີ່ປະເທດ ອິນໂດເນເຊຍ ກ່ອນກອງປະຊຸມສຸດຍອດຜູ້ນຳກຸ່ມ G20. ຜູ້ນຳທັງສອງໄດ້ແລກປ່ຽນຫຼາຍບັນຫາ ເປັນຕົ້ນແມ່ນການພົວພັນສອງຝ່າຍ, ບັນຫາໄຕຫວັນ, ອູແກຣນ-ລັດເຊຍ, ແຫຼມເກົາຫຼີ ແລະ ອື່ນໆ. ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ບັນຫາໄຕຫວັນ ເປັນວຽກງານພາຍໃນຂອງ ສປ ຈີນ, ເປັນຮາກຖານທາງການເມືອງຂອງການພົວພັນ ສປ ຈີນ-ອາເມລິກາ. ໃນຖານະຜູ້ນຳຂອງສອງປະເທດໃຫຍ່ ພວກເຮົາຕ້ອງສະແດງບົດບາດການເປັນຜູ້ນຳ, ກຳນົດແນວທາງນະໂຍບາຍທີ່ເໝາະສົມສຳລັບການພົວພັນຂອງສອງປະເທດ, ການພົວພັນ ສປ ຈີນ-ອາເມລິກາ ສ້າງຜົນກະທົບໂດຍລວມ ຕໍ່ປະຊາຄົມໂລກ ເພື່ອນຳມາສູ່ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງສາກົນ. ທ່ານ ໄບເດັນ ກ່າວວ່າ ອາເມລິກາ ຍຶດໝັ້ນນະໂຍບາຍຈີນດຽວບໍ່ປ່ຽນແປງ, ບໍ່ມີຄວາມຈຳເປັນສຳລັບສົງຄາມເຢັນຄັ້ງໃໝ່, ຈະຮ່ວມກັນກັບ ສປ ຈີນ ແກ້ໄຂບັນຫາຂອງໂລກ ເປັນຕົ້ນການປ່ຽນແປງສະພາບດິນຟ້າອາກາດ, ຄວາມບໍ່ໝັ້ນຄົງທາງດ້ານອາຫານ ແລະ ອື່ນໆ. ນອກຈາກນັ້ນ, ທ່ານ ສີ ຈິ້ນຜິງ ຍັງໄດ້ພົບປະກັບ ທ່ານ ເອັມມານູເອວ ມາຄຣົງ, ປະທານາທິບໍດີຝຣັ່ງ ຢູ່ອິນໂດເນເຊຍ ແລະ ໄດ້ກ່າວວ່າ ການພົວພັນຈີນ-ຝຣັ່ງ ຮັກສາໄດ້ທ່ວງທ່າການຂະຫຍາຍຕົວອັນຕັ້ງໜ້າ, ການຮ່ວມມືລະຫວ່າງສອງປະເທດໄດ້ຮັບການພັດທະນາຢ່າງຕັ້ງໜ້າ. ສອງຝ່າຍຄວນເປີດກວ້າງການຄ້າ ແລະ ການລົງທຶນ, ຮັກສາກະຕິກາ ແລະ ລະບຽບຂອງເສດຖະກິດການຄ້າສາກົນ.

**3). ພັກກອມມູນິດກູບາ**

ວັນທີ 27-29/10/2022, ກູບາ ໄດ້ເປັນເຈົ້າພາບຈັດກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ກຳມະກອນ ຄັ້ງທີ 22, ມີຄະນະຜູ້ແທນຈາກບັນດາພັກກອມມູນິດ ແລະ ກຳມະກອນ, ຂະບວນການຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນໂລກ ຈຳນວນ 142 ທ່ານ ທີ່ມາຈາກ 73 ພັກການເມືອງ ຈາກ 57 ປະເທດ ເຂົ້າຮ່ວມ, ລວມທັງ ພັກ ປປ ລາວ ພາຍໃຕ້ຄຳຂວັນ “ສາມັກຄີກັນເຂົ້າ ພວກເຮົາຈະເຂັ້ມແຂງຂຶ້ນ”, ໄດ້ຍົກໃຫ້ເຫັນຄວາມສຳຄັນຂອງຍຸດທະສາດການຮ່ວມມືຂອງບັນດາພັກການເມືອງໂດຍສະເພາະພັກກອມມູນິດ, ພັກກຳມະກອນ ແລະ ບັນດາຂະບວນການຝ່າຍຊ້າຍ ໃນການຕໍ່ສູ້ຕ້ານລັດທິເສລີນິຍົມແບບ ໃໝ່, ຊອກຫາຮູບແບບໃໝ່ຂອງການພັດທະນາທີ່ສົມດຸນ, ມີຄວາມຍຸດຕິທຳໃນສັງຄົມ, ເສີມຂະຫຍາຍການຮ່ວມມືລະຫວ່າງ ພັກກອມມູນິດ ແລະ ກຳມະກອນ, ຂະບວນການຝ່າຍ

ຊ້າຍ ແລະ ຂະບວນການກ້າວໜ້າໃນໂລກ ເພື່ອປົກປ້ອງສິດ, ເສລີພາບ ແລະ ຜົນປະໂຫຍດອັນຊອບທຳຂອງຊາວຜູ້ອອກແຮງງານໃນທົ່ວໂລກ.

ວັນທີ 15/11/2022, ພັກກອມມູນິດກູບາ ໄດ້ຈັດກອງປະຊຸມທາງໄກ ກັບ ພັກກອມມູນິດຈີນ ໂດຍການເປັນປະທານຮ່ວມ ຂອງ ສະຫາຍ Jorge Luis Broche, ເລຂາທິການສູນກາງພັກກອມມູນິດກູບາ ແລະ ສະຫາຍ Liu Jianchao, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ. ສອງຝ່າຍ ຢັ້ງຢືນຈະສືບຕໍ່ຮັດແໜ້ນຄວາມສາມັກຄີ ແລະ ຮ່ວມອຸດົມການໃນການສ້າງສັງຄົມນິຍົມທີ່ເຂັ້ມແຂງ. ສະຫາຍ Jorge Luis Broch ໄດ້ກ່າວວ່າແນວທາງນະໂຍບາຍການສ້າງສາພັດທະນາປະເທດຊາດພາຍໃຕ້ການນຳພາຂອງພັກກອມມູນິດຈີນ ໄດ້ກາຍເປັນຂະບວນການທີ່ເຂັ້ມແຂງ ແລະ ຮັ່ງມີ. ສະຫາຍ Liu Jianchao ສະແດງຄວາມຂອບໃຈຕໍ່ພັກ, ລັດ ແລະ ປະຊາຊົນກູບາ ທີ່ໄດ້ໃຫ້ການສະໜັບສະໜູນ ສປ ຈີນ ໃນໄລະຍະຜ່ານມາ, ສປ ຈີນ ກໍຈະສືບຕໍ່ໃຫ້ການສະໜັບສະໜູນກູບາໃນທຸກໆດ້ານ.

**4). ການເລືອກຕັ້ງທົ່ວໄປໃນມາເລເຊຍ**

ການເລືອກຕັ້ງທົ່ວໄປ ຄັ້ງທີ 15 ຂອງມາເລເຊຍ ໄດ້ຈັດຂຶ້ນໃນວັນທີ 19/11/2022, ເປັນການເລືອກຕັ້ງກ່ອນກຳນົດ ທີ່ຕາມກຳນົດ ຕ້ອງແມ່ນປີ 2023, ເພື່ອເລືອກເອົາຜູ້ແທນສະພາທັງໝົດ 222 ບ່ອນນັ່ງ, ຈາກຜູ້ສະໝັກທັງໝົດ 945 ຄົນ. ຄະນະກຳມະການການເລືອກຕັ້ງມາເລເຊຍ ໄດ້ປະກາດຜົນການເລືອກຕັ້ງທົ່ວໄປ ຢ່າງບໍ່ເປັນທາງ ແມ່ນພັກ Pakatan Harapan (PH) ນຳໂດຍ ທ່ານ Anwar Ibrahim, ອາດີດນາຍົກລັດຖະມົນຕີ ຍາດໄດ້ 82 ບ່ອນນັ່ງ; ພັກ Perikatan Nasional (PN) ນຳໂດຍ ທ່ານ Muhyiddin Yassin, ອາດີດນາຍົກລັດຖະມົນຕີ ໄດ້ 73 ບ່ອນນັ່ງ; ພັກ Barisan Nasional (BN), ພັກຮ່ວມລັດຖະບານຂອງພັກອົງການແຫ່ງຊາດມາເລ (UMNO) ນຳໂດຍທ່ານ Ismail Sabri Yaakob, ນາຍົກລັດຖະມົນຕີປັດຈຸບັນ ໄດ້ 30 ບ່ອນນັ່ງ; ພັກ the Gabungan Parti Sarawak (GPS) ໄດ້ 22 ບ່ອນນັ່ງ. ຕາມກົດໝາຍຂອງມາເລເຊຍ, ພັກການເມືອງໃດ ສາມາດຍາດໄດ້ທີ່ນັ່ງ ເຖິງ 112 ແມ່ນສາມາດຈັດຕັ້ງລັດຖະບານ ແຕ່ຜົນການເລືອກຕັ້ງຄັ້ງນີ້ ບໍ່ມີພັກການເມືອງໃດ ໄດ້ທີ່ນັ່ງສູງ ຈຶ່ງບໍ່ສາມາດຈັດຕັ້ງລັດຖະບານ. ດັ່ງນັ້ນ, ໃນວັນທີ 24/11/2022, ເຈົ້າຊີວິດມາເລເຊຍ ຈຶ່ງຮຽກປະຊຸມບັນດາຫົວໜ້າພັກ ແລະ ໄດ້ຕົກລົງແຕ່ງຕັ້ງທ່ານ Anwar Ibrahim ເປັນນາຍົກລັດຖະມົນຕີຄົນໃໝ່ຂອງມາເລເຊຍ.

**5). ການເລືອກຕັ້ງລັດຖະສະພາ ແລະ ວຸດທິສະພາອີຕາລີ**

ວັນທີ 22/10/2022, ທ່ານ ນາງ Gorgia Meloni, ນາຍົກລັດຖະມົນຕີອີຕາລີຄົນໃໝ່ ພ້ອມດ້ວຍຄະນະລັດຖະບານ ຊຸດໃໝ່ 24 ທ່ານ, ຍິງ 6 ທ່ານ ໄດ້ເຂົ້າພິທີສາບານຕົນຮັບຕຳແໜ່ງຢ່າງເປັນທາງການ ເພື່ອບໍລິຫານປະເທດ ພາຍຫຼັງພັກຂວາຈັດ ທີ່ນຳໂດຍ ພັກ Brother of Italy, ພັກ League ແລະ ພັກ Forza Italia ໄດ້ຮັບໄຊຊະນະໃນການເລືອກຕັ້ງລັດຖະສະພາ ແລະ ວຸດທິສະພາ ກ່ອນກຳນົດໃນວັນທີ 25/9/2022 ຜ່ານມາ. ທ່ານ ນາງ Gorgia Meloni ໄດ້ຢືນຢັນຄືນນະໂຍບາຍສະໜັບສະໜູນ NATO ແລະ EU.

**6). ການເລືອກຕັ້ງປະທານາທິບໍດີກາຊັກສະຖານ**

ວັນທີ 21/11/2022, ຄະນະກຳມະການການເລືອກຕັ້ງກາຊັກສະຖານ ໄດ້ປະກາດຜົນການເລືອກຕັ້ງປະທານາທິບໍດີຢ່າງບໍ່ເປັນທາງການ, ຊຶ່ງ ທ່ານ Kassym Jomart Tokayev, ປະທານາທິບໍດີຄົນປັດຈຸບັນ ໄດ້ຮັບໄຊຊະນະເປັນສະໄໝທີສອງ ດ້ວຍຄະແນນສຽງສະໜັບສະໜູນ 81,31% ຈາກຜູ້ມີສິດເລືອກຕັ້ງ 12 ລ້ານຄົນ ( 69% ຂອງປະຊາກອນທີ່ມີສິດເລືອກຕັ້ງ). ສ່ວນຜູ້ສະໝັກຊິງຕຳແໜ່ງປະທານາທິບໍດີອີກ 5 ທ່ານ ແມ່ນໄດ້ຄະແນນສຽງສະເລ່ຍຕໍ່ຄົນບໍ່ເກີນ 10%. ທ່ານ Tokayev ຈະດຳລົງຕຳແໜ່ງປະທານາທິບໍດີກາຊັກສະຖານໄປຕື່ມອີກ 7 ປີ ຕາມລັດຖະທຳມະນູນສະບັບໃໝ່ ແລະ ບໍ່ສາມາດລົງສະໝັກໄດ້ອີກໃນສະໄໝໜ້າ. ທ່ານ Tokayev ໄດ້ຖະແຫຼງວ່າຜົນການເລືອກຕັ້ງໃນຄັ້ງນີ້ ສະທ້ອນໃຫ້ເຫັນຄວາມເຊື່ອໝັ້ນຂອງປະຊາຊົນກາຊັກສະຖານ ແລະ ໃຫ້ຄຳໝັ້ນສັນຍາວ່າຈະຊຸກຍູ້ການປະຕິຮູບເພື່ອສ້າງມາດຕະຖານໃໝ່ໃຫ້ກັບລະບົບການເມືອງຂອງກາຊັກສະຖານທີ່ມີຄວາມຍຸດຕິທຳ ແລະ ເປີດກວ້າງຢ່າງແທ້ຈິງ; ຈະດຳເນີນນະໂຍບາຍການຕ່າງປະເທດເພື່ອຄວາມໝັ້ນຄົງແຫ່ງຊາດ, ດຶງດູດການລົງທຶນ, ພັດທະນາຄົມມະນາຄົມ ພື້ນຖານໂຄງລ່າງ ໃຫ້ເຂັ້ມແຂງ, ປະຊາຊົນມີຄວາມຜາສຸກ.

**7). ການເລືອກຕັ້ງບຣາຊິນ**

ການເລືອກຕັ້ງປະທານາທິບໍດີບຣາຊິນ ຮອບທຳອິດ ໃນວັນທີ 3/10/2022 ບໍ່ມີຜູ້ໄດ້ຮັບຄະແນນເກີນ 50%, ວັນທີ 30/10/2022, ບຣາຊິນ ຈຶ່ງໄດ້ຈັດການເລືອກຕັ້ງ ຮອບ 2 ລະຫວ່າງ ທ່ານ Luis Inacio Lula da Silva, ຈາກພັກແຮງງານບຣາຊິນ (ພັກຝ່າຍຊ້າຍ), ອະດີດປະທານາທິບໍດີ ແລະ ທ່ານ Jair Bolsonaro, ຈາກພັກເສລີນິຍົມ (ພັກຝ່າຍຂວາ), ປະທານາທິບໍດີຄົນປັດຈຸບັນ. ຜົນການເລືອກຕັ້ງແມ່ນ ທ່ານ Luis Inacio Lula da Silva, ພັກຝ່າຍຊ້າຍ ຊະນະດ້ວຍຄະແນນ 50.9%. ສ່ວນ ທ່ານ Bolsonaro ໄດ້ 49.1% , ພ້ອມທັງຖະແຫຼງຍອມຮັບຜົນການເລືອກຕັ້ງ. ຂະນະທີ່ ທ່ານ Lula ໄດ້ມີຄຳເຫັນຈະໂຮມປະເທດທີ່ແຕກແຍກ ໃຫ້ກັບມາເປັນໜຶ່ງດຽວ ແລະ ເພີ່ມທະວີການຮ່ວມມືກັບສາກົນໃຫ້ຫຼາຍຂຶ້ນ.

**8). ສະພາບການເມືອງອັງກິດ**

ວັນທີ 25/10/2022, ທ່ານ Rishi Sunak, ອາຍຸ 42 ປີ, ເຊື້ອຊາດອິນເດຍ, ອະດີດລັດຖະມົນຕີກະຊວງການເງິນ ໄດ້ຮັບເລືອກຕັ້ງເປັນຫົວໜ້າພັກອະນຸລັກນິຍົມຄົນໃໝ່ຂອງອັງກິດ ແລະ ຖືກແຕ່ງຕັ້ງເປັນນາຍົກລັດຖະມົນຕີຄົນທີ 57 ຂອງອັງກິດ ຕໍ່ຈາກ ທ່ານ ນາງ Liz Truss ທີ່ດຳລົງຕຳແໜ່ງນາຍົກລັດຖະມົນຕີອັງກິດພຽງ 45 ມື້. ທ່ານ Sunak ໄດ້ຖະແຫຼງວ່າ: ອັງກິດພວມປະເຊີນກັບວິກິດການດ້ານເສດຖະກິດຢ່າງໜັກໜ່ວງ; ການສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນ ຈະເປັນປັດໃຈຫຼັກຂອງການບໍລິຫານພາຍໃຕ້ລັດຖະບານຊຸດນີ້.

**9). ການເລືອກຕັ້ງກາງສະໄໝອາເມລິກາ**

ການເລືອກຕັ້ງກາງສະໄໝຂອງອາເມລິກາ ໄດ້ຈັດຂຶ້ນໃນວັນທີ 8/11/2022, ພັກຣີພັບບຣີກັນ ຍາດໄດ້ບ່ອນນັ່ງໃນສະພາຕ່ຳ 209 ບ່ອນນັ່ງ ຈາກທັງໝົດ 435 ບ່ອນນັ່ງ, ພັກເດໂມແຄັດ ຂອງປະທານາທິບໍດີ ໄບເດັນ ໄດ້ 189 ບ່ອນນັ່ງ, ຊຶ່ງຈະເຮັດໃຫ້ພັກລັດຖະບານເສຍອຳນາດສຽງສ່ວນຫຼາຍໃນສະພາຕ່ຳ ແລະ ຈະສົ່ງຜົນກະທົບຕໍ່ການດຳເນີນນະໂຍບາຍໃນໄລຍະອີກ 2 ປີຕໍ່ໜ້າ. ຂະນະທີ່ສະພາສູງ ໄດ້ເລືອກເອົາສະມາຊິກຕື່ມອີກ 35 ບ່ອນນັ່ງ, ຊຶ່ງປັດຈຸບັນມີທັງໝົດ 65 ບ່ອນນັ່ງ (ພັກເດໂມແຄັດ ມີ 36 ບ່ອນນັ່ງ ແລະ ພັກຣີພັບບຣີກັນ 29 ບ່ອນນັ່ງ). ຜົນການເລືອກຕັ້ງ ພັກເດໂມແຄັດ ສາມາດຍາດໄດ້ 20 ບ່ອນນັ່ງ, ພັກຣີພັບບຣີກັນ ໄດ້ 12 ບ່ອນນັ່ງ, ເຮັດໃຫ້ພັກເດໂມແຄັດ ຂອງທ່ານ ໂຈ ໄບເດັນ ມີສຽງໃນສະພາສູງ ທັງໝົດ 56 ບ່ອນນັ່ງ, ພັກຣີພັບບຣີກັນ ມີ 41 ສຽງ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ໃນເດືອນ ພະຈິກ 2022, ໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ ມີຫຼາຍເຫດການສຳຄັນ ດັ່ງນີ້:

- ວັນທີ 11/11/2022, ກຳປູເຈຍ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນຄັ້ງທີ 40 ແລະ 41, ຊຶ່ງບັນດາຜູ້ນຳອາຊຽນ ໄດ້ເຫັນດີວ່າ ຄວນກຳນົດກົນໄກທີ່ສາມາດປະເມີນໄດ້ ແລະ ລະບຸຂອບເວລາທີ່ຈະແຈ້ງຕໍ່ມຽນມາ ໃນການຈັດຕັ້ງປະຕິບັດມະຕິ 5 ຂໍ້ຂອງອາຊຽນ ໃນການແກ້ໄຂບັນຫາມຽນມາ. ຂະນະທີ່, ເລຂາທິການໃຫຍ່ ສປຊ ເຫັນດີຕໍ່ກົນໄກຂອງອາຊຽນໃນການແກ້ໄຂບັນຫາມຽນມາ ແລະ ໄດ້ຮຽກຮ້ອງໃຫ້ລັດຖະບານທະຫານມຽນມາປ່ອຍຕົວນັກໂທດທາງການເມືອງ, ຢຸດຕິຄວາມຮຸນແຮງ ແລະ ກັບຄືນສູ່ປະຊາທິປະໄຕ. ພ້ອມນີ້, ອາຊຽນ ເຫັນດີຮັບເອົາຕີມໍແລັດສະເຕ ເຂົ້າເປັນສະມາຊິກອາຊຽນ, ຊຶ່ງຂະບວນການພິຈາລະນາຮັບເອົາ ຕີມໍແລັດສະເຕ ເຂົ້າເປັນສະມາຊິກອາຊຽນຢ່າງສົມບູນແມ່ນຈະຖືກນຳສະເໜີໃນກອງປະຊຸມໃນປີ 2023.

ວັນທີ 11/11/2022, ກອງປະຊຸມສຸດຍອດອາຊຽນ-ສປ ຈີນ ຄັ້ງທີ 25, ທ່ານ ຫຼີ ເຄີສຽງ, ນາຍົກລັດຖະມົນຕີ ສປ ຈີນ ໄດ້ຮຽກຮ້ອງໃຫ້ເພີ່ມທະວີການຮ່ວມມືລະຫວ່າງຈີນ-ອາຊຽນ, ຮ່ວມກັນຮັກສາສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ແລະ ສາກົນ. ສປ ຈີນ-ອາຊຽນ ເປັນຄູ່ຮ່ວມຍຸດທະສາດຮອບດ້ານ, ການເປີດກວ້າງ ແລະ ການຮ່ວມມືເປັນສິ່ງທ້າທາຍຮ່ວມກັນ ເພື່ອສຸມໃສ່ການພັດທະນາ, ຮ່ວມມື, ສ້າງປະຊາຄົມອາຊຽນ-ສປ ຈີນ ໃຫ້ໃກ້ສິດຍິ່ງຂຶ້ນ. ສປ ຈີນ ຈະໃຫ້ທຶນກູ້ຢືມພິເສດເພື່ອການພັດທະນາ, ຍົກລະດັບການຄ້າ-ການລົງທຶນ; ຈະປະສານສົມທົບກັບອາຊຽນໃນການແກ້ໄຂບັນຫາທະເລຈີນໃຕ້ຕາມກົດໝາຍສາກົນ, ສົນທິສັນຍາ ສປຊ ວ່າດ້ວຍກົດໝາຍທາງທະເລ (UNCLOS) ບົນພື້ນຖານເຄົາລົບເຊິ່ງກັນ ແລະ ກັນ.

ກອງປະຊຸມສຸດຍອດອາຊຽນ-ອາເມລິກາ ຄັ້ງທີ 10 ໃນວັນທີ 12/11/2022 ໄດ້ເຫັນດີຍົກລະດັບການພົວພັນເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ, ຊຶ່ງ ທ່ານ ໂຈ ໄບເດັນ, ປະທານາທິບໍດີອາເມລິກາ ໄດ້ກ່າວວ່າ ອາຊຽນເປັນຫົວໃຈຂອງຍຸດທະສາດອິນໂດ-ປາຊີຟິກ ເສລີ, ເປີດກວ້າງ ແລະ ຮ່ວມກັນແກ້ໄຂບັນຫາຕ່າງໆໂດຍສະເພາະບັນຫາມຽນມາ, ທະເລຈີນໃຕ້ ແລະ ອື່ນໆ; ອາເມລິກາ ຈະເພີ່ມການຊ່ວຍເຫຼືອອາຊຽນ ຕື່ມອີກ 850 ລ້ານໂດລາສະຫະລັດໃນປີ 2023.

-ວັນທີ 15-16/11/2022, ກອງປະຊຸມສຸດຍອດຜູ້ນຳກຸ່ມ G20 ຄັ້ງທີ 17 ທີ່ເກາະບາຫຼີ, ອິນໂດເນເຊຍ, ພາຍໃຕ້ຫົວຂໍ້:" ຟື້ນຟູຮ່ວມກັນ ເພື່ອເພີ່ມທະວີຄວາມເຂັ້ມແຂງ" ປະກອບດ້ວຍ 20 ປະເທດສະມາຊິກເຂົ້າຮ່ວມ: ສປ ຈີນ, ລັດເຊຍ, ອາເມລິກາ, ຝຣັ່ງ, ອັງກິດ, ເຢຍລະມັນ, ອີຕາລີ, ອົດສະຕຣາລີ, ການາດາ, ຕວັກກີ, ຍີ່ປຸ່ນ, ສ.ເກົາຫຼີ, ອິນເດຍ, ບຣາຊິນ, ອາກຊັງຕິນ, ເມັກຊິກໂກ, ອາຣັບບີ ຊາອຸດີ, ອາຟຣິກກາໃຕ້, ອິນໂດເນເຊຍ ແລະ ສະຫະພາບເອີຣົບ. ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາ ແລະ ໄດ້ອອກຖະແຫຼງການຮ່ວມ ໂດຍມີເນື້ອໃນສຳຄັນ ຄື: ກຸ່ມ G20 ຈະສະໜັບສະໜູນປະເທດທີ່ກຳລັງພັດທະນາໃນການຮັບມືກັບສິ່ງທ້າທາຍຂອງໂລກ ແລະ ການບັນລຸເປົ້າໝາຍການພັດທະນາທີ່ຍືນຍົງ; ການປ້ອງກັນ ແລະ ຕ້ານການແຜ່ລະບາດຂອງພະຍາດຕ່າງໆ; ແກ້ໄຂບັນຫາສະພາບການປ່ຽນແປງຂອງດິນຟ້າອາກາດ; ຮັບຮູ້ຄວາມຈຳເປັນອັນຮີບດ່ວນໃນການກຳນົດນະໂຍບາຍ, ທຶນຮອນເຂົ້າໃນການແກ້ໄຂການຊຸດໂຊມຂອງສິ່ງແວດລ້ອມ; ຢືນຢັນຄືນລະບົບການຄ້າແບບຫຼາຍຝ່າຍຕາມລະບຽບ, ບໍ່ເລືອກປະຕິບັດ, ເສລີ, ຍຸດຕິທຳເປີດກວ້າງ, ກວມລວມ, ສະເໝີພາບ, ຍືນຍົງ ແລະ ໂປ່ງໃສ. ໃນກອງປະຊຸມ ຫຼາຍປະເທດໄດ້ຖົກຖຽງກັນກ່ຽວກັບຄວາມຂັດແຍ່ງລະຫວ່າງອູແກຣນ-ລັດເຊຍ ທີ່ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ລະບົບເສດຖະກິດໂລກ, ອັດຕາເງິນເຟີ້, ຄວາມບໍ່ໝັ້ນຄົງທາງດ້ານພະລັງງານ ແລະ ບັນຫາຕ່ອງໂສ້ອາຫານໃນທົ່ວໂລກ.

- ວັນທີ 14-19/11/2022, ລາຊະອານາຈັກໄທ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດການຮ່ວມມືທາງດ້ານເສດຖະກິດໃນຂົງເຂດອາຊີ-ປາຊີຟິກ ຄັ້ງທີ 29 (APEC 2022) ພາຍໃຕ້ຫົວຂໍ້: ເປີດກວ້າງສ້າງສາຍພົວພັນເຊື່ອມໂຍງເພື່ອຄວາມສົມດຸນ, ມີ 21 ປະເທດ ສະມາຊິກເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາ ໂດຍສະເພາະແມ່ນການຮ່ວມມືທາງການຄ້າ-ການລົງທຶນ, ການທ່ອງທ່ຽວ, ກະສິກຳ, ສິ່ງແວດລ້ອມ, ຄວາມໝັ້ນຄົງທາງອາຫານ, ການເຊື່ອມໂຍງທາງດ້ານດີຈີຕອນ, ການສົ່ງເສີມວິສາຫະກິດຂະໜາດນ້ອຍ, ຂະໜາດກາງ (SME), ເສດຖະກິດສີຂຽວ ແລະ ອື່ນໆ. ກອງປະຊຸມໄດ້ຖະແຫຼງຢືນຢັນການສົ່ງເສີມການຂະຫຍາຍຕົວທີ່ເຂັ້ມແຂງ, ດຸ່ນດ່ຽງ, ໝັ້ນຄົງ, ຍືນຍົງ ແລະ ການບັນລຸວິໄສທັດປະຊາຄົມອາຊີ-ປາຊີຟິກ ເປີດກວ້າງ, ປ່ຽນແປງ ແລະ ສະຫງົບສຸກ ໃນປີ 2040, ຫຼຸດຜ່ອນການປ່ຽນແປງສະພາບດິນຟ້າ-ອາກາດ, ການຄ້າ-ການລົງທຶນ, ການອະນຸລັກສິ່ງແວດລ້ອມ ແລະ ຮັບຮອງເປົ້າໝາຍວ່າດ້ວຍເສດຖະກິດຊີວະພາບ-ສີຂຽວ-ໝູນວຽນ (BCG); ຍັງຈະສະໜັບສະໜູນ ແລະ ສ້າງລະບົບການຄ້າຫຼາຍຝ່າຍ, ການພັດທະນາເຂດການຄ້າເສລີອາຊີ-ປາຊີຟິກ, ເສີມຂະຫຍາຍຈຸດຢືນຂອງ APEC ໃນຖານະເວທີປຶກສາຫາລືເສດຖະກິດທີ່ດີເດັ່ນໃນພາກພື້ນ, ບັນລຸການຟື້ນຕົວທາງເສດຖະກິດຫຼັງໂຄວິດ-19, ຮ່ວມກັນແກ້ໄຂບັນຫາເງິນເຟີ້ທີ່ເພີ່ມສູງຂຶ້ນ, ຄວາມໝັ້ນຄົງທາງອາຫານ, ການປ່ຽນແປງສະພາບດິນຟ້າອາກາດ, ໄພພິບັດທຳມະຊາດ.

-ສະພາບແຫຼມເກົາຫຼີ ສືບຕໍ່ມີຄວາມເຄັ່ງຕຶງເນື່ອງຈາກ ສ.ເກົາຫຼີ ແລະ ອາເມລິກາ ຮ່ວມກັນຊ້ອມຮົບແຕ່ເດືອນກັນຍາ 2022 ເປັນຕົ້ນມາ ແລະ ລະຫວ່າງວັນທີ 17-28/10/2022 ແລະ ສືບຕໍ່ວັນທີ 31/10-4/11/2022 ສອງປະເທດດັ່ງກ່າວ ພ້ອມກັບຍີ່ປຸ່ນ ໄດ້ຊ້ອມຮົບທາງອາກາດຂະໜາດໃຫຍ່ ພາຍໃຕ້ປະຕິບັດການ Vigilant strom ໂດຍມີເຮືອບິນເຂົ້າຮ່ວມທັງໝົດ 240 ລຳ. ໂຄສົກກະຊວງຕ່າງປະເທດ ສປປ ເກົາຫຼີ ໄດ້ກ່າວປະນາມການຊ້ອມຮົບດັ່ງກ່າວວ່າເປັນການຍຸແຍ່ ແລະ ຂົ່ມຂູ່ທາງການທະຫານຈາກພາຍນອກ ແລະ ໄດ້ຮຽກຮ້ອງໃຫ້ຢຸດຕິການຊ້ອມຮົບດັ່ງກ່າວ, ທັງຕອບໂຕ້ດ້ວຍການທົດລອງລູກສອນໄຟພິໄສໃກ້ 17 ລູກ ຕົກໃກ້ກັບທະເລຕາເວັນອອກ ແລະ ຍິງປືນໃຫຍ່ 100 ກວ່າລູກ ຕົກໃສ່ເຂດແດນລະຫວ່າງສອງເກົາຫຼີ. ເວລາຕໍ່ມາ, ອາເມລິກາ ໄດ້ສົ່ງເຮືອບິນຖິ້ມລະເບີດທາງຍຸດທະສາດ

B-1B 2 ລຳ ທີ່ປະຈຳການຢູ່ເກາະກວມ ເຂົ້າຮ່ວມຊ້ອມຮົບກັບ ສ.ເກົາຫຼີ ແລະ ຍີ່ປຸ່ນ ເຮັດໃຫ້ ສປປ ເກົາຫຼີ ຕອບໂຕ້ຄືນດ້ວຍການຍິງລູກສອນໄຟພິໄສໃກ້ 4 ລູກ ຕົກລົງທະເລເຫຼືອງ. ອາເມລິກາ ໄດ້ຮຽກຮ້ອງໃຫ້ສະພາຄວາມໝັ້ນຄົງ ສປຊ (UNSC) ລົງໂທດ ສປປ ເກົາຫຼີ ຕໍ່ການທົດລອງຍິງລູກສອນໄຟຂ້າມທະວີບ ເປັນການລະເມີດມະຕິຂອງ ສປຊ. ຂະນະທີ່, ສປ ຈີນ ແລະ ລັດເຊຍ ໄດ້ຄັດຄ້ານການລົງໂທດຝ່າຍດຽວ ຂອງອາເມລິກາ.

-ວັນທີ 21/11/2022, ທ່ານ ປຣະຍຸດ ຈັນໂອຊາ, ນາຍົກລັດຖະມົນຕີໄທ ໄດ້ພົບປະກັບ ທ່ານ ປຣະວິດ ວົງສຸວັນ, ຮອງນາຍົກລັດຖະມົນຕີ, ຫົວໜ້າພັກພະລັງປະຊາລັດ ເພື່ອແຈ້ງຄວາມປະສົງຂອງຕົນໃນການຍ້າຍອອກຈາກພັກປະລັງປະຊາລັດ ໄປເຂົ້າຮ່ວມພັກຮ່ວມໄທສ້າງຊາດ ພ້ອມກັບສະມາຊິກສະພາຜູ້ແທນລາດຊະດອນ (ສສ) ຂອງພັກພະລັງປະຊາລັດ ອີກ 13 ຄົນ. ນອກນີ້, ສສ ຈາກພັກປະຊາທິປັດ ຈຳນວນໜຶ່ງ ກໍຈະຍ້າຍໄປຮ່ວມກັບພັກຮ່ວມໄທສ້າງຊາດ. ປັດຈຸບັນ, ມີ ສສ ຫຼາຍກວ່າ 72 ຄົນ ທີ່ຕ້ອງການຈະຍ້າຍໄປຮ່ວມພັກໃໝ່ກັບ ທ່ານ ປຣະຍຸດ. ຂະນະທີ່, ທ່ານ ວິສະນຸ ເຄືອງາມ, ຮອງນາຍົກລັດຖະມົນຕີ, ພັກພະລັງປະຊາລັດ  ໄດ້ລະບຸວ່າສານລັດຖະທຳມະນູນ ຈະພິຈາລະນາຮ່າງກົດ  ໝາຍປະກອບລັດຖະທຳມະນູນ ວ່າດ້ວຍ ພັກການເມືອງ ແລະ ການເລືອກຕັ້ງ ໃນວັນທີ 23 ແລະ 30 ພະຈິກນີ້, ຊຶ່ງຈະກຳນົດວັນເວລາຂອງການເລືອກຕັ້ງຄັ້ງໃໝ່ຂອງໄທ.

-ການປະທະຢ່າງຮຸນແຮງລະຫວ່າງກອງກຳລັງອາກເມນີ ແລະ ອາແຊກໄບຊານ ໃນເຂດ Nagorno-karabakh ໃນວັນທີ 13/9/2022 ຜ່ານມາ, ລັດເຊຍ ເປັນຜູ້ຊ່ວຍເຈລະຈາຄວາມຂັດແຍ່ງຂອງສອງປະເທດນີ້ ແລະ ວັນທີ 31/10/2022, ລັດເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມສາມຝ່າຍ: ລັດເຊຍ, ອາກເມນີ ແລະ ອາແຊກໄບຊານ, ທີ່ເມືອງ Sochi ທາງພາກໃຕ້ຂອງລັດເຊຍ ເພື່ອປຶກສາຫາລືການຈັດຕັ້ງປະຕິບັດຖະແຫຼງການສາມຝ່າຍ ສະບັບປີ 2020 ແລະ 2021, ຊຶ່ງມີເນື້ອໃນບາງຕອນວ່າ ພວກເຮົາຢໍ້າຄືນຄຳໝັ້ນສັນຍາ ໃນການຕິດຕາມຢ່າງໃກ້ຊິດຕໍ່ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມກັນໃນອະດີດ ລວມທັງຖະແຫຼງການໃນປີ 2020 ແລະ 2021. ອາກເມນີ ແລະ ອາແຊກໄບຊານ ເຫັນດີໃຫ້ລັດເຊຍເປັນສື່ກາງໃນການເຈລະຈາ ໂດຍສະເພາະແມ່ນການດຳເນີນການສ້າງການຮ່ວມມືຂອງສະພາສາມຝ່າຍ ເພື່ອເພີ່ມຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ການປະທະກັນລະຫວ່າງ ອູແກຣນ ແລະ ລັດເຊຍ ຍັງສືບຕໍ່ເພີ່ມທະວີ. ລັດເຊຍໄດ້ສຸມໃສ່ການໂຈມຕີພື້ນຖານໂຄງລ່າງຂອງ ອູແກຣນ ຊຶ່ງເຮັດໃຫ້ໄຟຟ້າດັບໃນຫຼາຍຕົວເມືອງ ເປັນຕົ້ນຢູ່ນະຄອນຫຼວງ Kyiv, ເມືອງ Zaporozhye, Dnepropetrovsk  ແລະ Kharkhov, ແລະ ສຸມໃສ່ປ້ອງກັນເມືອງ Donetsk ຈາກກອງທັບອູແກຣນທີ່ໂຈມຕີ ຢ່າງໜັກໜ່ວງ ໂດຍນຳໃຊ້ອາວຸດຫຼາກຫຼາຍຊະນິດທີ່ໄດ້ຮັບການສະໜັບສະໜູນຈາກບັນດາປະເທດຕາເວັນຕົກກ່ອນໜ້ານີ້ ລວມທັງລູກສອນໄຟ HIMARS ທີ່ ອາເມລິກາ ຊ່ວຍເຫຼືອ. ພ້ອມກັນນັ້ນ, ລັດເຊຍ ໄດ້ຖອນກຳລັງ ອອກຈາກພາກພື້ນ Kherson ເພື່ອຫຼຸດຜ່ອນການໂຈມຕີຈາກອູແກຣນ ແລະ ຮັກສາເມືອງດັ່ງກ່າວ ທີ່ລົງມະຕິເປັນສ່ວນໜຶ່ງຂອງລັດເຊຍ. ວັນທີ 15/11/2022, ການປະທະລະຫວ່າງ ອູແກຣນ ແລະ ລັດເຊຍ, ມີລູກສອນໄຟສອງລູກ ຕົກໃສ່ດິນແດນຂອງໂປໂລຍ, ຊຶ່ງ ອາເມລິກາ ແລະ ບັນດາປະເທດຕາເວັນຕົກ ຕ່າງກໍເວົ້າວ່າເກີດຈາກລູກສອນໄຟປ້ອງກັນທາງອາກາດຂອງອູແກຣນ, ແຕ່ອູແກຣນພະຍາຍາມຖິ້ມໂທດວ່າແມ່ນການໂຈມຕີຂອງລັດເຊຍ.

ລັດເຊຍ ໄດ້ປະກາດຢຸດຊົ່ວຄາວການຂົນສົ່ງພືດພັນທັນຍາຫານ ຜ່ານທະເລດຳ (Black Sea Green initiative) ທີ່ໄດ້ລົງນາມຮ່ວມກັບ ອູແກຣນ, ຕວັກກີ ແລະ ສປຊ ໃນເດືອນກໍລະກົດ 2022 ຜ່ານມາ, ເນື່ອງຈາກ ອູແກຣນ ໄດ້ໃຊ້ໂດຣນ 16 ລຳ ໂຈມຕີເຮືອຂອງລັດເຊຍ ຢູ່ທະເລດຳທີ່ ເມືອງ Sevastol, ເຂດ Crimea, ທ່ານ Putin ໄດ້ຖະແຫຼງວ່າ ການຢຸດການຂົນສົ່ງຊົ່ວຄາວດັ່ງກ່າວ ກໍເພື່ອຄວາມປອດໄພຂອງບັນດາເຮືອຂົນສົ່ງ ແລະ ວ່າທັນຍາຫານຕ່າງໆເຫຼົ່ານັ້ນ ສ່ວນໃຫຍ່ສົ່ງໄປບັນດາປະເທດ EU ຫຼາຍກວ່າສົ່ງໄປປະເທດດ້ອຍພັດທະນາ. ແຕ່ພາຍຫຼັງການປຶກສາຫາລືແກ້ໄຂບັນຫາກັບຫຼາຍຝ່າຍ, ລັດເຊຍ ໄດ້ເຫັນດີໃຫ້ກັບມາຂົນສົ່ງໄດ້ປົກກະຕິ.

ຂະນະດຽວກັນ, ບັນດາປະເທດຕາເວັນຕົກ ຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ, ຊຶ່ງ EU ປະກາດວ່າ ໄດ້ກະກຽມສະເໜີງົບປະມານ 18 ຕື້ເອີໂຣ ເພື່ອຊ່ວຍເຫຼືອ ອູແກຣນ ໃນປີ 2023 ແລະ ບັນດາລັດຖະມົນຕີຕ່າງປະເທດ ປະເທດກຸ່ມ G7 ປະກາດຈະສືບຕໍ່ສະໜັບສະໜູນອູແກຣນ. ຂະນະທີ່, ຮົງກາຣີ ເປັນປະເທດສະມາຊິກດຽວຂອງ

NATO ໄດ້ປະຕິເສດການເຂົ້າຮ່ວມລະດົມທຶນເພື່ອຊ່ວຍເຫຼືອ ອູແກຣນ ແລະ ຂວ້ຳບາດລັດເຊຍ ໂດຍໄດ້ຮຽກຮ້ອງໃຫ້ ບັນດາຝ່າຍທີ່ກ່ຽວຂ້ອງຫັນໜ້າເຂົ້າຫາກັນເຈລະຈາເພື່ອຍຸດຕິຂໍ້ຂັດແຍ່ງໃນ ອູແກຣນ. ຂະນະທີ່ ກອງປະຊຸມສະມັດຊາໃຫຍ່ ສປຊ (UNGA) ໄດ້ລົງປະຊາມະຕິໃຫ້ລັດເຊຍ ຕ້ອງຊົດເຊີຍການສູນເສຍທີ່ເກີດຂຶ້ນກັບ ອູແກຣນ ໃນລະຫວ່າງຂໍ້ຂັດແຍ່ງ, ໂດຍໄດ້ຮັບການເຫັນດີຈາກ 94 ປະເທດ ຈາກທັງໝົດ 193 ປະເທດ, ງົດອອກສຽງ 73 ປະເທດ ແລະ ຂັດຄ້ານ 14 ປະເທດ (ໃນນັ້ນລວມມີ ລັດເຊຍ, ສປ ຈີນ, ອີຣານ ແລະ ຊີຣີ). ຍັດຕິດັ່ງກ່າວເປັນເອກະສານທີ່ບໍ່ມີຄວາມສຳຄັນທາງດ້ານກົດໝາຍ, ບັນດາປະເທດຕາເວັນຕົກ ມີຈຸດປະສົງຄອບຄອງຊັບສິນຂອງລັດເຊຍທີ່ຖືກແຊ່ແຂງກ່ອນໜ້ານີ້.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ແລະ ຄຕພ

1. **ພິທີໂຮມຊຸມນຸມສະເຫຼີມສະຫຼອງຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງ ພັກກອມມູນິດຈີນ**




ວັນທີ 31 ຕຸລາ 2022, ສະຫາຍ ພັນຄຳ ວິພາວັນ, ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມພິທີໂຮມຊຸມນຸມສະເຫຼີມສະຫຼອງ ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ທີ່ຈັດໂດຍສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ ທີ່ນະຄອນຫຼວງວຽງຈັນ ໂດຍມີບັນດາການນຳຂັ້ນສູງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ຜູ້ຕາງໜ້າຈາກບັນດາອົງການຂອງພັກ-ລັດ, ພ້ອມດ້ວຍພະນັກງານສະຖານທູດຈີນ, ນັກທຸລະກິດ ແລະ ສະມາຄົມຊາວຈີນຕ່າງດ້າວ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ສະຫາຍ ພັນຄຳ ວິພາວັນ ໄດ້ຕາງໜ້າໃຫ້ສູນກາງພັກ ປປ ລາວ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ທີ່ອັດລົງດ້ວຍຜົນສຳເລັດອັນສະຫງ່າງາມ, ເຊິ່ງເປັນເຫດການການເມືອງທີ່ສຳຄັນໃນປະຫວັດສາດຍຸກໃໝ່ ຂອງພັກ ແລະ ປະຊາຊົນຈີນ, ຜົນສຳເລັດ ຂອງກອງປະຊຸມໃຫຍ່ ໄດ້ສະແດງໃຫ້ເຫັນຢ່າງເດັ່ນຊັດ ເຖິງຂີດໝາຍໃໝ່ ແຫ່ງການເຕີບໃຫຍ່ຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງ ຂອງພັກ, ສະແດງໃຫ້ເຫັນເຖິງຄວາມເປັນເອກະພາບ, ຄວາມຕັດສິນໃຈອັນສູງສົ່ງ ຂອງທົ່ວພັກ ເພື່ອສືບຕໍ່ແບກຫາບພາລະກຳປະຫວັດສາດ ໃນການສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກສະໄໝໃໝ່ ໃຫ້ປະກົດຜົນເປັນຈິງຕາມຄາດໝາຍທີ່ວາງໄວ້; ສະຫາຍ ຍັງໄດ້ເນັ້ນໜັກ ວ່າ: ໃນຖານະເພື່ອນສະຫາຍຮ່ວມອຸດົມການ ແລະ ຄູ່ຮ່ວມຊະຕາກຳດຽວກັນ, ພັກ ປປ ລາວ ໄດ້ຖືສຳຄັນໃນລະດັບສູງຕໍ່ເຫດການການເມືອງ ຂອງພັກກອມມູນິດຈີນ ໃນຄັ້ງນີ້ ກໍຄື ການຢຶດໝັ້ນທັດສະນະອັນສະເໝີຕົ້ນສະເໝີປາຍຂອງຕົນ ໃນການສະໜັບສະໜູນພາລະກິດສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ແລະ ມີຄວາມຊົມຊື່ນຍິນດີເປັນຢ່າງຍິ່ງ ຕໍ່ການເຕີບໃຫຍ່ເຂັ້ມແຂງ ຂອງພັກກອມມູນິດຈີນ ແລະ ຜົນສຳເລັດອັນສະຫງ່າງາມ ຂອງກອງປະຊຸມໃຫຍ່ຄັ້ງນີ້; ສະແດງຄວາມເຊື່ອໝັ້ນວ່າ ພາຍໃຕ້ແສງສະຫວ່າງ ຂອງບັນດາມະຕິກອງປະຊຸມໃຫຍ່ຄັ້ງນີ້ ແລະ ການຊີ້ນຳນຳພາອັນເຂັ້ມແຂງ ຂອງສູນກາງພັກກອມມູນິດຈີນ ທີ່ຖື ສະຫາຍ ສີ ຈິ້ນຜິງ ເປັນແກນກາງ ແລະ ດ້ວຍພະລັງແຮງແຫ່ງຄວາມສາມັກຄີເປັນປຶກແຜ່ນ ຂອງປວງຊົນທັງຊາດ, ພັກ, ລັດ ແລະ ປະຊາຊົນຈີນອ້າຍນ້ອງ ຈະສາມາດບັນລຸຜົນສຳເລັດຮອບດ້ານ, ໃຫຍ່ຫຼວງ ແລະ ໜັກແໜ້ນ ໃນການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ວາງອອກຢ່າງແນ່ນອນ.

## 2. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສາກົນຂອງພັກກອມມູນິດ ແລະ ກຳມະກອນ (IMCWP)



ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສາກົນຂອງພັກກອມມູນິດ ແລະ ກຳມະກອນ (IMCWP) ຄັ້ງທີ 22 ພາຍໃຕ້ຫົວຂໍ້ຫຼັກ “ສາມັກຄີກັບກູບາ ແລະ ກັບບັນດານັກຕໍ່ສູ້ທັງໝົດ. ສາມັກຄີກັນເຂົ້າ ພວກເຮົາຈະເຂັ້ມແຂງຂຶ້ນ ໃນການຕໍ່ສູ້ຕ້ານຈັກກະພັດ, ໄປພ້ອມໆກັບຂະບວນມະຫາຊົນ ແລະ ສັງຄົມ ຕໍ່ໜ້າລັດທິທຶນນິຍົມ ແລະ ແນວທາງຂອງພວກເຂົາ, ຕໍ່ໜ້າໄພຂົ່ມຂູ່ຂອງລັດທິຟາຊິດ ແລະ ສົງຄາມ; ເພື່ອປົກປັກຮັກສາສັນຕິພາບ, ສະພາບແວດລ້ອມ, ສິດທິຂອງຊາວຜູ້ອອກແຮງງານ, ຄວາມສາມັກຄີ ແລະ ເພື່ອສັງຄົມນິຍົມ”; ພາຍໃຕ້ຄຳຂັວນ “ສາມັກຄີກັນເຂົ້າ ພວກເຮົາຈະເຂັ້ມແຂງຂຶ້ນ” ຊຶ່ງໄດ້ຈັດຂຶ້ນແຕ່ວັນທີ 27-29 ຕຸລາ 2022 ທີ່ນະຄອນຫຼວງລາຮາວານ, ປະເທດກູບາ ໂດຍການເປັນເຈົ້າພາບຂອງ ພັກກອມມູນິດກູບາ; ມີຄະນະຜູ້ແທນຈາກບັນດາພັກກອມມູນິດ ແລະ ກຳມະກອນ, ຂະບວນການຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນໂລກ ຈຳນວນ 142 ທ່ານ ທີ່ມາຈາກ 73 ພັກການເມືອງ ຈາກ 57 ປະເທດ ເຂົ້າຮ່ວມ. ຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ປະກອບຄຳເຫັນ ໂດຍໄດ້ຍົກໃຫ້ເຫັນບັນດາສິ່ງທ້າທາຍຂອງສະພາບການພາກພື້ນ ແລະ ສາກົນ ໄລຍະໃໝ່, ເຊິ່ງໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາເສດຖະກິດສັງຄົມຂອງບັນດາປະເທດໃນໂລກ ກໍຄື ການເຄື່ອນໄຫວຂອງບັນດາພັກກອມມູນິດ, ພັກກຳມະກອນ, ພັກຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນໂລກ; ສະພາບການດັ່ງກ່າວຮຽກຮ້ອງໃຫ້ບັນດາພັກກອມມູນິດ, ພັກກຳ ມະກອນ ແລະ ກຳລັງຝ່າຍຊ້າຍ ສາມັກຄີກັນເຂົ້າເພື່ອຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ; ຍົກໃຫ້ເຫັນບົດຮຽນ ແລະ ຜົນສຳເລັດພາຍໃຕ້ການນຳພາ-ຊີ້ນຳ ຂອງພັກປະຊາຊົນປະຕິວັດລາວ ໃນພາລະກິດປະຕິວັດຕໍ່ສູ້ຕ້ານພວກຈັກກະພັດລ່າເມືອງຂຶ້ນ ເພື່ອຍາດເອົາເອກະລາດແຫ່ງຊາດຂອງຕົນ ກໍຄື ພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ ໃນເງື່ອນໄຂ ແລະ ສະພາບແວດລ້ອມໃໝ່, ຜົນສຳເລັດຂອງການສ້າງສາພັດທະນາປະເທດຊາດ ໃນໄລຍະຜ່ານມາ ແລະ ການຈັດຕັ້ງປະຕິບັດບັນດາເປົ້າໝາຍທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກວາງອອກ; ສະໜັບສະໜູນພັກ, ລັດຖະບານ ແລະ ປະຊາຊົນກູບາ ອ້າຍນ້ອງ ໃນພາລະກິດການຕໍ່ສູ້ອັນ

ເປັນທຳ, ຮຽກຮ້ອງໃຫ້ພວກຈັກກະພັດຍົກເລີກການຂວ້ຳບາດຕໍ່ກູບາ; ຢືນຢັນສືບຕໍ່ຮ່ວມມືກັບບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ລວມທັງ ບັນດາພັກກອມມູນິດ ແລະ ພັກກຳມະກອນ, ຂະບວນການຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນໂລກ ໂດຍຢຶດໝັ້ນແນວທາງການຕ່າງປະເທດວາງອອກ.

ກອງປະຊຸມ ໄດ້ເປັນເອກະພາບກັນຮັບຮອງເອົາຖະແຫຼງການສຸດທ້າຍຂອງກອງປະຊຸມ ເຊິ່ງໄດ້ສະໜັບສະໜູນບັນດາຂໍ້ລິເລີ່ມ ແລະ ການຕໍ່ສູ້ຂອງຊົນຊັ້ນກຳມະກອນຂອງບັນດາປະເທດໃນໂລກ, ຕ້ານກົນອຸບາຍແຊກແຊງມ້າງເພທຳລາຍຂອງພວກຈັກກະພັດ, ຕ້ານການຂວ້ຳບາດຕໍ່ກູບາ ແລະ ບັນຫາອື່ນໆ. ພິເສດແມ່ນກອງປະຊຸມ ໄດ້ຮັບຮອງພັກ ປປ ລາວ ເຂົ້າເປັນສະມາຊິກໜ່ວຍງານວິຊາການຂອງກອງປະຊຸມສາກົນຂອງພັກກອມມູນິດ ແລະ ກຳມະກອນ (Working Group of IMCWP) ໄລຍະປີ 2023-2025 ເຊິ່ງເປັນການຍົກສູງບົດບາດ ແລະ ອິດທິພົນຂອງພັກ ປປ ລາວ ໃນເວທີສາກົນ.

## 3. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງປະທານສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ



ວັນທີ 17 ພະຈິກ 2022, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ແຟັກນັງໂດ ກອງຊາເລສ ໂຢ, ວິລະຊົນແຫ່ງຊາດ ສ.ກູບາ, ປະທານສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ພ້ອມດ້ວຍຄະນະ ໃນໂອກາດການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຂອງ ຄະນະຜູ້ແທນສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ, ຄຽງຄູ່ບັນຍາກາດທີ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລາວ ແລະ ກູບາ ກຳລັງໄດ້ຮັບການສືບຕໍ່ເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງ, ການນຳຂັ້ນສູງ ຂອງ ສອງປະເທດ ມີການໄປມາຫາສູ່, ພົບປະຢ້ຽມຢາມເຊິ່ງກັນ ແລະ ກັນ, ການຮ່ວມມືຂອງບັນດາຂະແໜງການເປັນຕົ້ນແມ່ນຂະແໜງສຶກສາ-ກິລາ, ສາທາລະນະສຸກ ແລະ ກະສິກຳຍັງສືບຕໍ່ມີປະສິດທິຜົນ ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງປະເທດ. ສະຫາຍ ແຟັກນັງໂດ ກອງຊາເລສ ໂຢ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ຂອງ ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ແຈ້ງຈຸດປະສົງຂອງການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ, ທັງໄດ້ໃຫ້ຄວາມໝາຍໝັ້ນທີ່ຈະພົວພັນຮ່ວມມື ແລະ ປະສານງານກັບສະມາຄົມມິດຕະພາບ ລາວ-ກູບາ ເພື່ອເຄື່ອນໄຫວສະໜັບສະໜູນເຊິ່ງກັນ ແລະ

ກັນ ເພື່ອຜົນປະໂຫຍດຂອງສອງຊາດ ທັງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືອັນດີງາມຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ກູບາ.

**4. ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດເວເນຊູເອລາ ຄົນໃໝ່ ປະຈໍາ ສປປ ລາວ**



ວັນທີ 9 ພະຈິກ 2022 ທີ່ສໍານັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ນ. ຕາເຕຍນາ ໂຣເຊຟີນາ ປຸກ ໂມເຣໂນ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມແຫ່ງ ສາທາລະນະລັດ ເວເນຊູເອລາ ປະຈໍາ ສປປ ລາວ (ທີ່ມີສໍານັກງານຕັ້ງຢູ່ ສສ ຫວຽດນາມ), ເນື່ອງໃນໂອກາດທີ່ເດີນທາງມາຍື່ນສານຕາຕັ້ງ ທີ່ ສປປ ລາວ.

ສະຫາຍ ສົມພອນ ສີຈະເລີນ ໄດ້ສະແດງຄວາມຊົມເຊີຍ ສະຫາຍ ນ. ຕາເຕຍນາ ໂຣເຊຟີນາ ປຸກ ໂມເຣໂນ ທີ່ໄດ້ຮັບມອບໝາຍໜ້າທີ່ເປັນເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ເວເນຊູເອລາ ປະຈໍາ ສປປ ລາວ ຄົນໃໝ່ ແລະ ສະແດງຄວາມເຊື່ອໝັ້ນວ່າ ສະຫາຍ ເອກອັກຄະລັດຖະທູດຄົນໃໝ່ ຈະສືບຕໍ່ໃຫ້ການຮ່ວມມື ແລະ ປະສານສົມທົບຢ່າງແໜ້ນແຟ້ນ ກັບຄະນະພົວພັນຕ່າງປະເທດສູນກາງພັກ ໃນການປະຕິບັດໜ້າທີ່ເປັນຂົວຕໍ່ປະສານງານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ເວເນຊູເອລາ-ລາວ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ເວເນຊູເອລາ ໃຫ້ນັບມື້ນັບມີປະສິດທິຜົນຍິ່ງໆຂຶ້ນ.

## 5. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສາກົນບັນດາພັກການເມືອງໃນອາຊີ ທີ່ປະເທດຕວັກກີ




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເດີນທາງໄປເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ 11 ຂອງບັນດາພັກການເມືອງໃນອາຊີ (11th General Assembly of the ICAPP) ທີ່ອິດສະຕັນບູນ, ປະເທດຕວັກກີ, ໃນລະຫວ່າງວັນທີ 17-20 ພະຈິກ 2022, ພາຍໃຕ້ຫົວຂໍ້ "ບົດບາດຂອງບັນດາພັກການເມືອງໃນການສ້າງຄວາມເຂັ້ມແຂງແກ່ການປຶກສາຫາລື ເພື່ອສັນຕິພາບ, ຄວາມຈະເລີນຮຸ່ງເຮືອງ ແລະ ການຮ່ວມມື ໃນໂລກ" ໂດຍການເປັນເຈົ້າພາບຂອງພັກຍຸຕິທຳ ແລະ ການພັດທະນາ ເຊິ່ງເປັນພັກກຳອຳນາດຂອງປະເທດຕວັກກີ ແລະ ມີຜູ້ແທນ 70 ພັກການເມືອງ ຈາກ 31 ປະເທດ ເຂົ້າຮ່ວມ.

ຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ປະກອບຄຳເຫັນໃນກອງປະຊຸມ ໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ການເປັນເຈົ້າພາບຂອງພັກຍຸຕິທຳ ແລະ ການພັດທະນາ; ຍົກໃຫ້ເຫັນບົດບາດຂອງບັນດາພັກການເມືອງໃນການຮ່ວມມືສາກົນ ເຊິ່ງເປັນປັດໄຈສຳຄັນໃນການເສີມສ້າງການພັດທະນາຮ່ວມກັນ; ເປີດກວ້າງການຮຽນຮູ້ເຊິ່ງກັນ ແລະ ກັນ ແລະ ມີຜົນປະໂຫຍດຮ່ວມກັນ ເພື່ອຍົກສູງຊີວິດການເປັນຢູ່ຂອງປະຊາຊົນ, ທັງເປັນການຮັດແໜ້ນ ແລະ ເສີມຂະຫຍາຍການພົວພັນຮ່ວມມື ເພື່ອພາລະກິດສັນຕິພາບ, ຄວາມຈະເລີນຮຸ່ງເຮືອງ ແລະ ການຮ່ວມມື ໃນພາກພື້ນ ແລະ ໃນໂລກ. ພ້ອມນີ້, ກໍໄດ້ແຈ້ງສະພາບການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ປປ ລາວ ແລະ ແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9; ແລະ ຢັ້ງຢືນຈະສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍການຮ່ວມມືກັບບັນດາພັກການເມືອງ ໂດຍຍຶດໝັ້ນໃນແນວທາງການຕ່າງປະເທດຂອງພັກ.

ບັນດາຜູ້ແທນກອງປະຊຸມ ໄດ້ເປັນເອກະພາບກັນຮັບຮອງເອົາຖະແຫຼງການອິດສະຕັນບູນ, ເຊິ່ງມີເນື້ອໃນສຳຄັນວ່າ ໄອແຄັບກາຍເປັນເວທີທີ່ໝັ້ນຄົງ ແລະ ເປັນເວທີທີ່ເປັນເອກະລັກສະເພາະ ແລະ ເປີດກວ້າງ ໃຫ້ບັນດາພັກການເມືອງໃນພາກພື້ນ ທີ່ມີອຸດົມການທາງການເມືອງແຕກຕ່າງກັນເຂົ້າຮ່ວມ ແນໃສ່ເສີມສ້າງຄວາມເຂົ້າອົກເຂົ້າໃຈຊຶ່ງກັນ ແລະ ການຮ່ວມມືຕາມວິໄສທັດຂອງ "ການສ້າງປະຊາຄົມອາຊີ" ແຫ່ງສັນຕິພາບ, ມິດຕະພາບ, ຄວາມກົມກຽວປອງດອງ, ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ ເພື່ອບັນລຸເປົ້າໝາຍດັ່ງກ່າວບັນດາພັກການເມືອງຈະຕ້ອງເຊີດຊູຄວາມຮັບຜິດຊອບຮ່ວມກັນ ໃນການຮັບມືກັບສິ່ງທ້າທາຍຕ່າງໆ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງໂລກ ໂດຍຜ່ານເວທີປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ກ່ຽວກັບສະພາບການພາກພື້ນ ແລະ ສາກົນ ເປັນຕົ້ນ ບັນຫາສະຖຽນລະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງ; ໂລກາພິວັດ, ການປ່ຽນແປງດິນຟ້າອາກາດ, ພະຍາດລະບາດ ແລະ ອື່ນໆ.

## 6. ຄະນະຜູ້ແທນ ພັກ ປປ ລາວ ເຂົ້າຮ່ວມກອງປະຊຸມພິເສດ ຂອງບັນດາພັກການເມືອງໃນອາຊີ ທີ່ປະເທດ ອາແຊກໄບຊານ




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມພິເສດຂອງບັນດາພັກການເມືອງໃນອາຊີ ກ່ຽວກັບ “ຄວາມໝັ້ນຄົງ ແລະ ການຮ່ວມມື: ບົດບາດຂອງບັນດາພັກການເມືອງ” ທີ່ນະຄອນຫຼວງບາກູ, ສະທາລະນະລັດອາແຊກໄບຊານ ໃນລະຫວ່າງວັນທີ 20-22 ພະຈິກ 2022 ໂດຍການເປັນເຈົ້າພາບຂອງ ພັກອາແຊກໄບຊານໃໝ່ (YAP) ເປັນພັກກຳອຳນາດຂອງ ອາແຊກໄບຊານ, ເຊິ່ງມີຜູ້ແທນຈາກ 13 ພັກການເມືອງ ຈາກ 11 ປະເທດ ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້, ຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ຂຶ້ນປະກອບຄຳເຫັນ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການສ້າງຕັ້ງພັກອາແຊກໄບຊານໃໝ່ ຄົບຮອບ 30 ປີ ກໍຄືການເປັນເຈົ້າພາບກອງປະຊຸມຄັ້ງນີ້, ຍົກໃຫ້ເຫັນບົດບາດຂອງບັນດາພັກການເມືອງທີ່ຕ້ອງໄດ້ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນຕໍ່ພາລະກິດລວມຂອງປະເທດຊາດ; ກຳນົດແນວທາງນະໂຍບາຍໃນການພັດທະນາປະເທດ ແລະ ສົ່ງເສີມການຮ່ວມມືກັບສາກົນໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ; ຍົກໃຫ້ເຫັນຄວາມສຳຄັນຂອງກອງປະຊຸມຄັ້ງນີ້ ເຊິ່ງເປັນເວທີສຳຄັນແຫ່ງການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ພັກການເມືອງພາກພື້ນຕ່າງໆ ໃນຖານະເປັນກຳລັງການເມືອງທີ່ມີຄວາມຮັບຜິດຊອບ ເພື່ອພ້ອມກັນນຳເອົາການພົວພັນຮ່ວມມືຂຶ້ນສູ່ລະດັບສູງກວ່າເກົ່າ ດ້ວຍກົນໄກທີ່ເໝາະສົມ ແລະ ເນື້ອໃນອຸດົມສົມບູນຍິ່ງໆຂຶ້ນ, ຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ເປັນພື້ນຖານ ແລະ ກວມລວມຂອງຍຸກສະໄໝ; ປະກອບສ່ວນເສີມຂະຫຍາຍການພົວພັນດ້ານລັດ ກໍຄື ການເສີມສ້າງຄວາມໝັ້ນຄົງ ແລະ ສັນຕິພາບ ທີ່ຍືນຍົງ. ກອງປະຊຸມ ໄດ້ເອກະພາບຮັບຮອງເອົາຖະແຫຼງການບາກູ ໂດຍໄດ້ເນັ້ນໜັກເຖິງຄວາມຈຳເປັນໃນການໃຊ້ທ່າແຮງຂອງບັນດາພັກການເມືອງ ໃນຖານະອົງປະກອບສຳຄັນໃນການຊຸກຍູ້ກົນໄກການສົ່ງເສີມສັນຕິພາບ ແລະ ການຮ່ວມມື ໃນພາກພື້ນ ແລະ ສາກົນ ໃຫ້ມີປະສິດທິຜົນຍິ່ງຂຶ້ນ.

ໃນໂອກາດເຂົ້າຮ່ວມກອງປະຊຸມພິເສດດັ່ງກ່າວ, ຫົວໜ້າຄະນະຜູ້ແທນພັກ ປປ ລາວ ຍັງໄດ້ຮັບກຽດຂຶ້ນອ່ານສານອວຍພອນຂອງເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງເຖິງປະທານພັກອາແຊກໄບຊານໃໝ່ ເນື່ອງໃນໂອກາດວັນສ້າງຕັ້ງພັກຄົບຮອບ 30 ປີ.